ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR









# Training for Master Trainers of the Spoken Lao Program

### (04 - 14 July 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

## Training for master trainer of the Spoken Lao Program
## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-07-04 | Newspaper | Education, Science and Sport Daily News | Front and page 2 |
| 2023-07-05 | Newspaper | Economic and Commerce | Front and page 4 |
| 2023-07-05 | Newspaper | Vientiane Times | Page 4 |
| 2023-07-05 | Newspaper | Vientiane Mai | Page 2 |
| 2023-07-05 | Newspaper | KPL Pathet Lao | Front and page 4 |
| 2023-07-07 | Newspaper | Pasaxon | Page 9 |
| 2023-07-10 | Newspaper | Economic and Commerce | Page 3 |
| 2023-07-14 | Newspaper | Vientiane Mai | Page 2 |
| 2023-07-04 | Social Media | Vientiane Mai Facebook | 47K Followers |
| 2023-07-04 | Social Media | Edu-Sport Daily News Facebook | 6.5K Followers |
| 2023-07-04 | Social Media | KPL Pathet Lao Facebook | 372K Followers |
| 2023-07-06 | Social Media | Edu-Sport TV online Facebook | 64K Followers |
| 2023-07-06 | Social Media | Edu-Sport TV online Youtube | 486 subscribers |
| 2023-07-06 | Social Media | Pasaxon Facebook | 22K Followers |
| 2023-07-10 | Social Media | Tetra Tech International Development Facebook | 34K Followers |
| 2023-07-10 | Social Media | Tetra Tech International Development LinkedIn | 56K Followers |
| 2023-07-04 | Website | Vientiane Mai | Read article here |
| 2023-07-04 | Website | Lao Tribune | Read article here |
| 2023-07-06 | Website | BEQUAL Website | Read article here |
| 2023-07-07 | Website | Lao Economic Daily Website | Read article here |
| 2023-07-06 | TV | Edu-Sport TV online | Watch the news in Lao here |
| 2023-07-05 | Radio | Lao National Radio FM 103.7 | |
| 2023-07-05 | Radio | Army Radio FM 99.7 | |
| 2023-07-05 | Radio | Vientiane Radio FM 105.5 | |
| 2023-07-05 | Radio | Public Security Radio FM 101.5 | |
| 2023-07-05 | Radio | Education Radio FM 103.7 MHZ | |
| 2023-07-05 | Radio | Lao Youth Radio FM 90.0 MHZ | |
| 2023-07-06 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 660 members |

| | | | |
|---|---|---|---|
| 2023-07-06 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-07-06 | WhatsApp | ETSP | 3 groups with ethnic teachers<br>98 members |
| 2023-07-06 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-07-06 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-07-06 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

# Media Clipping

| 2023-07-04 | Newspaper | Education, Science and Sport Daily News | Front and page 2 |
|---|---|---|---|




| 2023-07-05 | Newspaper | Economic and Commerce | Page 4 |
|---|---|---|---|

## ຝຶກອົບຮົມ ຄູຫຼັກແຫຼ່ງ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ໄດ້ເປີດກອງປະຊຸມຝຶກອົບຮົມ

➡ ອ່ານຕໍ່ໜ້າ A4

**ຝຶກອົບຮົມ ...**

( ຕໍ່ຈາກໜ້າ 1 )

ຄູຝຶກຫັດແຫຼ່ງສໍາລັບໂຄງການຝຶກເວົ້າພາສາລາວ ເພື່ອຊ່ວຍເຫຼືອຄູຮູ້ທັກສະທີ່ຈະສາມາດສອນນັກຮຽນທີ່ເຂົ້າຮຽນຊັ້ນປະຖົມສຶກສາແຕ່ຍັງບໍ່ທັນສາມາດເວົ້າພາສາລາວໄດ້ດີເທື່ອ ໃຫ້ມີທັກສະຮູ້ພັງສືພາສາລາວໄດ້ດີຂຶ້ນ ລະຫວ່າງວັນທີ 3 - 7 ກໍລະກົດ 2023 ທີ່ແຂວງວຽງຈັນ.

ເປັນປະທານເປີດງານໂດຍທ່ານ ຄໍາຈັນ ລັດທະຍອດ ຮອງຜູ້ອໍານວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ( ສວສ ) ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ບັອບ ແມັກລາລິນ ຫົວໜ້າຮັບຜິດຊອບວຽກງານນະໂຍບາຍ, ຍຸດທະສາດ ແລະ ການບໍລິຫານຂອງແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນການສຶກສາຂັ້ນພື້ນຖານຢູ່ ສປປ ລາວ ( ແຜນງານບີຄວາ ); ມີຄູຝຶກຫັດແຫຼ່ງຈໍານວນ 14 ທ່ານຈາກ ສວສ, ວິທະຍາໄລຄູດົງຄໍາຊ້າງ, ໂຮງຮຽນປະຖົມສົມບູນສາທິດດົງຄໍາຊ້າງ ແລະ ໂຮງຮຽນປະຖົມທົ່ງກາງ ເຂົ້າຮ່ວມ.

ທ່ານ ຄໍາຈັນ ລັດທະຍອດ ກ່າວວ່າ: " ຈຸດປະສົງການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອໃຫ້ຄູຝຶກຫັດແຫຼ່ງມີຄວາມເຂົ້າໃຈດີກ່ຽວກັບປຶ້ມແບບຮຽນ ແລະ ຄູ່ມືຄູ ສະບັບປັບປຸງໃໝ່ ແລະ ມີຄວາມໝັ້ນໃຈໃນການຖ່າຍທອດຄວາມຮູ້ໃຫ້ແກ່ຄູສອນຂັ້ນ ປ 1 ທີ່ຈະຈັດຕັ້ງປະຕິບັດໂຄງການຝຶກເວົ້າພາສາລາວ ຕັ້ງແຕ່ເດືອນກັນຍາ 2023.

ປະເທດລາວເປັນປະເທດທີ່ອຸດົມສົມບູນທາງດ້ານວັດທະນະທໍາ ແລະ ພາສາ ມີ 4 ກຸ່ມໝວດພາສາຫຼັກ ແລະ ມີຫຼາຍກວ່າ 50 ພາສາເວົ້າ. ເມື່ອເດັກເລີ່ມເຂົ້າໂຮງຮຽນ ເຂົາເຈົ້າເວົ້າພາສາຊົນເຜົ່າຂອງເຂົາເຈົ້າໄດ້ຢ່າງຄ່ອງແຄ້ວ ແຕ່ຍັງເຫັນວ່າມີເຖິງ 40% ຂອງນັກຮຽນຂັ້ນ ປ 1 ທີ່ຍັງບໍ່ທັນມີຄວາມໝັ້ນໃຈໃນການເວົ້າພາສາລາວ. ສິ່ງດັ່ງກ່າວສ້າງຄວາມທ້າທາຍໃຫ້ແກ່ນັກຮຽນ ແລະ ຄູສອນ ເນື່ອງຈາກເດັກນ້ອຍຕ້ອງຮຽນຮູ້ການອ່ານ ແລະ ຂຽນເປັນພາສາລາວ ແລະ ຍັງຕ້ອງຮຽນຮູ້ເນື້ອໃນຫຼັກສູດຂອງວິຊາຕ່າງໆເປັນພາສາລາວ.

ການຝຶກອົບຮົມຈະເນັ້ນໃສ່ເນື້ອໃນຂອງເອກະສານຝຶກອົບຮົມ ຂອງໂຄງການຝຶກເວົ້າພາສາລາວ ສະບັບປັບປຸງ ແລະ ເຕັກນິກທີ່ມີປະສິດທິພາບໃນການພັດທະນາທັກສະການເວົ້າພາສາລາວຂອງນັກຮຽນ. ຜູ້ເຂົ້າຮ່ວມຍັງຈະໄດ້ກະກຽມການຝຶກອົບຮົມຄູ ກ່ຽວກັບການປັບຕົວໃຫ້ກຽມພ້ອມສໍາລັບກິດຈະກໍາຕ່າງໆທີ່ແທດເໝາະກັບລະດັບພາສາຂອງນັກຮຽນ, ນໍາໃຊ້ເກມເພື່ອສ້າງບັນຍາກາດການຮຽນໃຫ້ມ່ວນຊື່ນໃນການຮຽນພາສາ ແລະ ນໍາໃຊ້ພາສາແມ່ຂອງນັກຮຽນ ເພື່ອສະໜັບສະໜູນການຮຽນພາສາລາວ. ການປະຕິບັດໄລຍະໃໝ່ຂອງໂຄງການຝຶກເວົ້າພາສາລາວນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ຜ່ານແຜນງານບີຄວາ.

ທ່ານ ບັອບ ແມັກລາລິນ ໄດ້ກ່າວວ່າ: " ຖ້ານັກຮຽນຍັງບໍ່ເກັ່ງດ້ານພາສາ ໂດຍສະເພາະພາສາທີ່ນໍາໃຊ້ໃນການຮຽນ - ການສອນ, ມັນຈະເປັນສິ່ງທີ່ທ້າທາຍທີ່ສຸດສໍາລັບພວກເຂົາທີ່ເຂົ້າໃຈຄໍາເວົ້າຂອງຄູ, ການຮ່ວມກິດຈະກໍາ ແລະ ການຮຽນໃຫ້ໄດ້ຜົນການຮຽນຕາມຄາດໝາຍ. ລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ແມ່ນຮູ້ສຶກເປັນກຽດຢ່າງຍິ່ງທີ່ໄດ້ໃຫ້ການຊ່ວຍເຫຼືອຊຸກຍູ້ຄວາມພະຍາຍາມຂອງຂອງກະຊວງສຶກສາທິການ ແລະ ກິລາ ເພື່ອນໍາສະເໜີການປັບປຸງຊ່ວຍເຫຼືອໃຫ້ແກ່ນັກຮຽນ ເມື່ອເລີ່ມເຂົ້າຮຽນແຕ່ຍັງບໍ່ທັນເກັ່ງເວົ້າພາສາລາວ. ພວກເຮົາຈິ່ງຮ່ວມມືກັນໃຫ້ສາມາດຍາດມາໄດ້ຜົນສໍາເລັດການມີລະບົບການສຶກສາຮຽນຮ່ວມໃນ ສປປ ລາວ ທີ່ດີຂຶ້ນ ແລະ ເໝາະສົມສໍາລັບເດັກທຸກຄົນ ".

ນາງ ພອນສິຣິ ອຸໄທວັນ ສູນຄົ້ນຄວ້າພາສາລາວ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ອະທິບາຍວ່າ: " ໃນປີ2019 ສສກ ໂດຍການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ໄດ້ລິເລີ່ມໂຄງການຝຶກເວົ້າພາສາລາວໄລຍະທົດລອງ. ໃນໄລຍະທົດລອງ ແມ່ນໄດ້ເພີ່ມຊົ່ວໂມງຮຽນວິຊາພາສາລາວຕື່ມຈາກຊົ່ວໂມງຮຽນປົກກະຕິອີກ 5 ຊົ່ວໂມງໃນແຕ່ລະອາທິດ ເພື່ອປັບປຸງທັກສະການເວົ້າ ແລະ ການຟັງຂອງນັກຮຽນຂັ້ນ ປ 1, ໂຄງການຝຶກເວົ້າພາສາລາວ ຜ່ານມາໄດ້ທົດລອງປະຕິບັດຢູ່ໃນ 7 ເມືອງເປົ້າໝາຍ ທີ່ມີນັກຮຽນຊົນເຜົ່າທີ່ບໍ່ເວົ້າພາສາລາວເປັນພາສາຫຼັກໃນຄອບຄົວຈໍານວນຫຼາຍໃນແຂວງຜົ້ງສາລີ, ບໍລິຄໍາໄຊ, ຄໍາມ່ວນ ແລະ ແຂວງສາລະວັນ ໃນລະຫວ່າງປີ 2019 ຫາ 2021 ".



| | | | |
|---|---|---|---|
| 2023-07-05 | Newspaper | Vientiane Times | Page 4 |



The Research Institute for Educational Sciences, with support from Australia and the United States Agency for International Development through the BEQUAL Programme, launch a training for Master Trainers of the Spoken Lao Programme, to help teachers build the Lao literacy skills of children who start primary school but are not able to speak Lao. Starting in September, the revised Spoken Lao Programme will be piloted in schools in 21 districts of 10 provinces. About 40 percent of Grade 1 children are not confident speakers of Lao. This creates challenges for both them and their teachers, as children need to learn to read and write in Lao and all lessons are taught in Lao.

| | | | |
|---|---|---|---|
| 2023-07-05 | Newspaper | Vientiane Mai | Page 2 |



ສຶກສາ

## ສວສ ຍົກລະດັບຄູຝຶກຫຼັກແຫຼ່ງໂຄງການຝຶກເວົ້າພາສາລາວ

● ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນ ສ ອາເມຣິກາ (USAID) ຜ່ານແຜນງານບີຄວາ ໄດ້ຈັດຝຶກອົບຮົມຄູຝຶກຫຼັກແຫຼ່ງ ສໍາລັບໂຄງການຝຶກເວົ້າພາສາລາວ ເພື່ອຊ່ວຍເຫຼືອຄູຮູ້ທັກສະທີ່ຈະສາມາດສອນນັກຮຽນທີ່ເຂົ້າຮຽນຊັ້ນປະຖົມສຶກສາ ແຕ່ຍັງບໍ່ທັນສາມາດເວົ້າພາສາລາວໄດ້ດີ ແລະ ຮູ້ໜັງສືພາສາລາວດີຂຶ້ນ.

ທ່ານ ຄໍາຈັນ ລັດທະຍອດ ຮອງຜູ້ອໍານວຍການ ສວສ ກ່າວໃນພິທີເປີດຝຶກອົບຮົມດັ່ງກ່າວ ວັນທີ 3 ກໍລະກົດ 2023 ວ່າ: ການຝຶກອົບຮົມຄັ້ງນີ້ ເພື່ອໃຫ້ຄູຝຶກຫຼັກແຫຼ່ງ ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປຶ້ມແບບຮຽນ ແລະ ຄູ່ມືຄູ ສະບັບປັບປຸງໃໝ່ ແລະ ມີຄວາມໝັ້ນໃຈໃນການຖ່າຍທອດຄວາມຮູ້ໃຫ້ຄູສອນຊັ້ນ ປ 1 ທີ່ຈະຈັດຕັ້ງປະຕິບັດໂຄງການຝຶກເວົ້າພາສາລາວນັບແຕ່ເດືອນກັນຍາ 2023 ເປັນຕົ້ນໄປ ພວກເຮົາຈະຕິດຕາມຜົນສໍາເລັດຂອງຫຼັກສູດຂອງໂຄງການຝຶກເວົ້າ ສະບັບປັບປຸງໃໝ່ ແລະ ການໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ ເພື່ອປັບປຸງຜົນການຮຽນຂອງນັກຮຽນທີ່ເວົ້າພາສາອື່ນ ທີ່ບໍ່ແມ່ນພາສາລາວຢູ່ໃນຄອບຄົວ ພວກເຮົາຂໍຂອບໃຈລັດຖະບານອົດສະຕຣາລີ ແລະ ລັດຖະບານ ສ ອາເມຣິກາ ທີ່ໄດ້ໃຫ້ການຊ່ວຍເຫຼືອກະຊວງ ສສກ ໃນການບັນລຸເປົ້າໝາຍການມອບການສຶກສາທີ່ມີຄຸນນະພາບໃຫ້ເດັກນ້ອຍທຸກຄົນໃນ ສປປ ລາວ.

ທ່ານ ບັອບ ແມັກລາລິນ ຫົວໜ້າຮັບຜິດຊອບວຽກງານນະໂຍບາຍ ຍຸດທະສາດ ແລະ ການບໍລິຫານຂອງແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນການສຶກສາຊັ້ນພື້ນຖານຢູ່ ສປປ ລາວ (ແຜນງານບີຄວາ) ກ່າວວ່າ: ຖ້ານັກຮຽນຍັງບໍ່ເກັ່ງດ້ານພາສາ ໂດຍສະເພາະ ພາສາທີ່ນໍາໃຊ້ໃນການຮຽນ-ການສອນ ຈະເປັນສິ່ງທີ່ທ້າທາຍທີ່ສຸດສໍາລັບພວກເຂົາທີ່ເຂົ້າໃຈຄໍາເວົ້າຂອງຄູ ການຮ່ວມກິດຈະກໍາ ແລະ ການຮຽນໃຫ້ໄດ້ຜົນການຮຽນຕາມຄາດໝາຍ ເຊິ່ງລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ຮູ້ສຶກເປັນກຽດທີ່ໄດ້ໃຫ້ການຊ່ວຍເຫຼືອ ຊຸກຍູ້ຄວາມພະຍາຍາມຂອງກະຊວງ ສສກ ເພື່ອນໍາສະເໜີການປັບປຸງຊ່ວຍເຫຼືອໃຫ້ນັກຮຽນ ເມື່ອເລີ່ມເຂົ້າຮຽນແຕ່ຍັງບໍ່ທັນເກັ່ງເວົ້າພາສາລາວ ພວກເຮົາຈຶ່ງໄດ້ຮ່ວມມືກັນເພື່ອໃຫ້ສາມາດຍາດໄດ້ຜົນສໍາເລັດການມີລະບົບການສຶກສາຮຽນຮ່ວມໃນ ສປປ ລາວ ທີ່ດີຂຶ້ນ ແລະ ເໝາະສົມສໍາລັບເດັກທຸກຄົນ.

ຊຸດຝຶກອົບຮົມຄູຝຶກຫຼັກແຫຼ່ງ ສໍາລັບໂຄງການຝຶກເວົ້າພາສາລາວຄັ້ງນີ້ ຈະດໍາເນີນໄປແຕ່ວັນທີ 3-7 ກໍລະກົດ 2023 ເຊິ່ງຈະເນັ້ນໃສ່ເນື້ອໃນເອກະສານໂຄງການຝຶກເວົ້າພາສາລາວ ສະບັບປັບປຸງ ແລະ ເຕັກນິກທີ່ມີປະສິດທິຜົນໃນການພັດທະນາທັກສະການເວົ້າພາສາລາວຂອງນັກຮຽນ ຜູ້ເຂົ້າຮ່ວມຍັງຈະໄດ້ກະກຽມການຝຶກອົບຮົມຄູກ່ຽວກັບການປັບຕົວໃຫ້ກຽມພ້ອມສໍາລັບກິດຈະກໍາຕ່າງໆ ທີ່ແທດເໝາະກັບລະດັບພາສາຂອງນັກຮຽນ ນໍາໃຊ້ເກມເພື່ອສ້າງບັນຍາກາດການຮຽນພາສາໃຫ້ມີຄວາມມ່ວນຊື່ນ ແລະ ນໍາໃຊ້ພາສາແມ່ຂອງນັກຮຽນ ເພື່ອສະໜັບສະໜູນການຮຽນພາສາລາວ.

ນອກຈາກໂຄງການຝຶກເວົ້າພາສາລາວແລ້ວ ກະຊວງ ສສກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ກໍາລັງສ້າງສາລະຄະດີຄູຕົວແບບຕອນໃໝ່ ທີ່ຄູສອນເປັນຄູສອນທີ່ຢູ່ເຂດຫ່າງໄກສອກຫຼີກ ຂອງແຂວງຜົ້ງສາລີ ເຊິ່ງຄູທ່ານນີ້ໄດ້ບອກເລົ່າປະສົບການຂອງລາວ ກ່ຽວກັບການສອນນັກຮຽນຊົນເຜົ່າ ຜູ້ທີ່ບໍ່ໄດ້ເວົ້າພາສາລາວ ເປັນພາສາຫຼັກຢູ່ໃນເຮືອນສາລະຄະດີຕອນນີ້ຈະອອກອາກາດໄວໆນີ້ ເຊິ່ງຄູສາມາດຮັບຊົມວີດີໂອ ເພື່ອເບິ່ງເຕັກນິກການຊ່ວຍເຫຼືອນັກຮຽນຊົນເຜົ່າ ໄດ້ທາງຊ່ອງຢູທູບ ວີດີໂອສໍາລັບການພັດທະນາຄູ Development Videos.

| 2023-07-05 | Newspaper | KPL Pathet Lao | Front and page 4 |
|---|---|---|---|

ຝຶກອົບຮົມຄູ ສໍາລັບໂຄງການຝຶກເວົ້າພາສາລາວ



| 2023-07-07 | Newspaper | Pasaxon | Page 9 |
|---|---|---|---|

ຝຶກອົບຮົມຄູຝຶກຫັດແກ່ນສໍາລັບໂຄງການຝຶກເວົ້າພາສາລາວ



ຂະຫຍາຍໂອກາດເຂົ້າຮຽນການສຶກສາຂັ້ນພື້ນຖານຢູ່ ສປປ ລາວ (ແຜນງານບີຄວາ) ຊຶ່ງມີຄູຝຶກຫັດແກ່ນ ຈໍານວນ 14 ທ່ານ ຈາກວິທະຍາໄລຄູດົງຄໍາຊ້າງ, ໂຮງຮຽນປະຖົມສົມບູນສາທິດດົງຄໍາຊ້າງ ແລະ ໂຮງຮຽນປະຖົມທົ່ງກາງ ເຂົ້າຮ່ວມ.

ການຝຶກອົບຮົມແມ່ນເນັ້ນໃສ່ເນື້ອໃນຂອງເອກະສານຝຶກອົບຮົມຂອງໂຄງການຝຶກເວົ້າພາສາລາວສະບັບປັບປຸງ ແລະ ເຕັກນິກທີ່ມີປະສິດທິພາບໃນການພັດທະນາທັກສະການເວົ້າພາສາລາວຂອງນັກຮຽນ. ຜູ້ເຂົ້າຮ່ວມຍັງຈະໄດ້ກະກຽມການຝຶກອົບຮົມຄູກ່ຽວກັບການ...

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົສຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ໄດ້ເປີດ...

ຍັງບໍ່ທັນສາມາດເວົ້າພາສາລາວໄດ້ດີເທື່ອ ໃຫ້ມີທັກສະຮູ້ໜັງສືພາສາລາວໄດ້ດີຂຶ້ນ. ພາຍໃຕ້ການເປັນປະທານຂອງທ່ານ ຄໍາຈັນ ລັດທະຍອດ ຮອງຜູ້ອໍານວຍການສະ...

| 2023-07-04 | Vientiane Mai Facebook |
|---|---|

Vientiane Mai
2h ·

ເຝິກອົບຮົມຄູເຝິກຫຼັກແຫຼ່ງສໍາລັບໂຄງການເຝິກເວົ້າພາສາລາວ

..............................................................................

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີແລະ ອົງການ USAID ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ເປີດກອງປະຊຸມເຝິກອົບຮົມຄູເຝິກຫຼັກແຫຼ່ງສໍາລັບໂຄງການເຝິກເວົ້າພາສາລາວ ໃນວັນທີ 3 ກໍລະກົດ 2023 ທີ່ໂຮງແຮມ ເອພີເອັສ (APS) ເມືອງວັງວຽງ ແຂວງວຽງຈັນ ໂດຍມີທ່ານທ່ານ ຄໍາຈັນ ລັດທະຍອດ ຮອງຜູ້ອໍານວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ແລະ ທ່ານ ບອັບ ແມັກລາລິນ ຫົວໜ້າຮັບຜິດຊອບວຽກງານນະໂຍບາຍ ຍຸດທະສາດ ແລະ ການບໍລິຫານ ຂອງແຜນງານ ແຜນງານບີຄວາ ໄດ້ເປີດກອງປະຊຸມຝຶກອົບຮົມຄູຝຶກຫຼັກແຫຼ່ງ ຈໍານວນ  14 ທ່ານ ສໍາລັບໂຄງການຝຶກເວົ້າພາສາລາວ ພ້ອມຄູເຝິກຫຼັກແຫຼ່ງຈາກ ສວສ ວິທະຍາໄລຄູດົງຄໍາຊ້າງ ໂຮງຮຽນປະຖົມສົມບູນສາທິດດົງຄໍາຊ້າງ ແລະ ໂຮງຮຽນປະຖົມທົ່ງກາງ ຈໍານວນ 14 ທ່ານ ເຊິ່ງກອງປະຊຸມຈະດໍາເນີນເປັນເວລາ 1 ອາທິດ.

#ກົດອ່ານຂໍ້ມູນເພີ່ມຕື່ມ👇
https://v2.vientianemai.net/archives/58550
#VientianeMai




| 2023-07-04 | Edu-Sport Daily News Facebook |
|---|---|

ໜັງສືພິມສຶກສາ-ກິລາລາຍວັນ
a day ago ·

ສວສ ຝຶກລະດັບຄູຝຶກຫຼັກແຫຼ່ງໂຄງການຝຶກເວົ້າພາສາລາວ
++++++++++++++++++++++++++++++++

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຫຼື ສວສ ກະຊວງສຶກສາທິການ ແລະ ກີລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນ ສະຫະລັດອາເມຣິກາ (USAID) ໂດຍຜ່ານແຜນງານບີຄວາ ໄດ້ເປີດກອງປະຊຸມຝຶກອົບຮົມຄູຝຶກຫຼັກແຫຼ່ງ ສໍາລັບໂຄງການຝຶກເວົ້າພາສາລາວ ເພື່ອຊ່ວຍເຫຼືອຄູຊັ້ນ ທີ່ຈະສາມາດສອນນັກຮຽນທີ່ເຂົ້າຮຽນຊັ້ນປະຖົມສຶກສາແຕ່ຍັງບໍ່ທັນສາມາດເວົ້າພາສາລາວໄດ້ດີເທື່ອ ໃຫ້ມີທັກສະຮູ້ໜັງສືພາສາລາວດີຂຶ້ນ.

ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 3 ກໍລະກົດ 2023 ທີ່ໂຮງແຮມເອພີເອັສ ເມືອງວັງວຽງ ແຂວງວຽງຈັນ ໂດຍມີ ທ່ານ ຄໍາຈັນ ລັດທະຍອດ ຮອງຜູ້ອໍານວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ທ່ານ ບ໊ອບ ແມັກລາລິນ ຫົວໜ້າຮັບຜິດຊອບວຽກງານນະໂຍບາຍ. ຍຸດທະສາດ ແລະ ການບໍລິຫານຂອງແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນການສຶກສາຂັ້ນພື້ນຖານ ຢູ່ ສປປ ລາວ (ແຜນງານບີຄວາ) ພ້ອມດ້ວຍຄູຝຶກຫຼັກແຫຼ່ງຈາກ ສວສ , ວິທະຍາໄລຄູດົງຄໍາຊ້າງ, ໂຮງຮຽນປະຖົມສົມບູນສາທິດດົງຄໍາຊ້າງ ແລະ ໂຮງຮຽນປະຖົມທົ່ງກາງ ຈໍານວນ 14 ທ່ານ ເຂົ້າຮ່ວມ.

ໂອກາດນີ້, ທ່ານ ຄໍາຈັນ ລັດທະຍອດ ກ່າວວ່າ: "ການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອໃຫ້ຄູຝຶກຫຼັກແຫຼ່ງມີຄວາມເຂົ້າໃຈດີກ່ຽວກັບປຶ້ມແບບຮຽນ ແລະ ຄູ່ມືຄູ ສະບັບປັບປຸງໃໝ່ ແລະ ມີຄວາມໝັ້ນໃຈໃນການຖ່າຍທອດຄວາມຮູ້ໃຫ້ແກ່ຄູສອນຊັ້ນ ປ.1 ທີ່ຈະຈັດຕັ້ງປະຕິບັດໂຄງການຝຶກເວົ້າພາສາລາວຕັ້ງແຕ່ເດືອນກັນຍາ 2023 ສະນັ້ນ, ພວກເຮົາແມ່ນດໍາເນີນ ເບິ່ງຜົນສໍາເລັດຂອງຫຼັກສູດຂອງໂຄງການຝຶກເວົ້າສະບັບປັບປຸງໃໝ່ ແລະ ການໃຫ້ການສະໜັບສະໜູນຄູຢ່າງຕໍ່ເນື່ອງ ເພື່ອປັບປຸງຜົນການຮຽນຂອງນັກຮຽນທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາລາວຢູ່ໃນຄອບຄົວ. ຢ່າງໃດກໍຕາມ, ໃນໂອກາດນີ້ ພວກເຮົາຂໍຂອບໃຈມາຍັງລັດຖະບານອົດສະຕຣາລີ ແລະ ລັດຖະບານສະຫະລັດອາເມຣິກາ ທີ່ໃຫ້ການຊ່ວຍເຫຼືອກະຊວງສຶກສາທິການ ແລະ ກີລາ ເພື່ອບັນລຸເປົ້າໝາຍການມອບການສຶກສາ ທີ່ມີຄຸນນະພາບໃຫ້ແກ່ເດັກນ້ອຍທຸກຄົນໃນລາວ".

ໂອກາດດຽວກັນ, ທ່ານ ບ໊ອບ ແມັກລາລິນ ໄດ້ກ່າວວ່າ: "ຖ້ານັກຮຽນຫາກຍັງບໍ່ເກັ່ງດ້ານພາສາ ໂດຍສະເພາະພາສາທີ່ນໍາໃຊ້ໃນການຮຽນການສອນ ມັນຈະເປັນສິ່ງທີ່ທ້າທາຍທີ່ສຸດສໍາລັບພວກເຂົາທີ່ເຂົ້າໃຈຄໍາເວົ້າຂອງຄູ, ການຮ່ວມກິດຈະກໍາ ແລະ ການຮຽນໃຫ້ໄດ້ຜົນການຮຽນຕາມຄາດໝາຍ. ຊຶ່ງລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ແມ່ນຮູ້ສຶກເປັນກຽດຢ່າງຍິ່ງທີ່ໄດ້ໃຫ້ການຊ່ວຍເຫຼືອຊຸກຍູ້ຄວາມພະຍາຍາມຂອງກະຊວງສຶກສາທິການ ແລະ ກີລາ ເພື່ອນໍາສະເໜີການປັບປຸງຊ່ວຍເຫຼືອໃຫ້ແກ່ນັກຮຽນ ເມື່ອເລີ່ມເຂົ້າຮຽນແຕ່ຍັງບໍ່ທັນເກັ່ງເວົ້າພາສາລາວ. ພວກເຮົາຈຶ່ງຮ່ວມມືກັນ ໃຫ້ສາມາດຍາດມາໄດ້ຜົນສໍາເລັດການມີລະບົບການສຶກສາຮຽນຮ່ວມໃນ ສປປ ລາວ ທີ່ດີຂຶ້ນ ແລະ ເໝາະສົມສໍາລັບເດັກທຸກຄົນ".

ຢ່າງໃດກໍຕາມ, ກອງປະຊຸມຝຶກອົບຮົມຄູຝຶກຫຼັກແຫຼ່ງ ສໍາລັບໂຄງການຝຶກເວົ້າພາສາລາວ ຄັ້ງນີ້ ແມ່ນຈະດໍາເນີນໄປເປັນເວລາ 5 ວັນ ລະຫວ່າງວັນທີ 3-7 ກໍລະກົດ 2023 ຊຶ່ງການຝຶກອົບຮົມຈະເນັ້ນໃສ່ເນື້ອໃນເອກະສານໂຄງການຝຶກເວົ້າພາສາລາວ ສະບັບປັບປຸງ ແລະ ເຕັກນິກທີ່ມີປະສິດທິພາບໃນການພັດທະນາທັກສະການເວົ້າພາສາລາວຂອງນັກຮຽນ ໂດຍຜູ້ເຂົ້າຮ່ວມຍັງຈະໄດ້ກະກຽມການຝຶກອົບຮົມຄູກ່ຽວກັບການປັບຕົວໃຫ້ກຽມພ້ອມສໍາລັບກິດຈະກໍາຕ່າງໆທີ່ເຫດເໝາະກັບລະດັບພາສາຂອງນັກຮຽນ, ນໍາໃຊ້ເກມເພື່ອສ້າງບັນຍາກາດການຮຽນໃຫ້ມ່ວນຊື່ນໃນການຮຽນພາສາ ແລະ ນໍາໃຊ້ພາສາແມ່ຂອງນັກຮຽນເພື່ອສະໜັບສະໜູນການຮຽນພາສາລາວ.

ທັງນີ້, ນອກຈາກໂຄງການຝຶກເວົ້າພາສາລາວແລ້ວ, ກະຊວງສຶກສາທິການ ແລະ ກີລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ກໍາລັງສ້າງສາລະຄະດີຄູຕົວແບບຕອນໃໝ່ ທີ່ຄູສອນແມ່ນເປັນຄູສອນທີ່ຢູ່ເຂດຫ່າງໄກສອກຫຼີກ ທີ່ແຂວງຜົ້ງສາລີ ຊຶ່ງຄູທ່ານນີ້ໄດ້ບອກເລົ່າປະສົບການຂອງລາວກ່ຽວກັບການສອນນັກຮຽນຊົນເຜົ່າຜູ້ທີ່ບໍ່ໄດ້ເວົ້າພາສາລາວເປັນພາສາຫຼັກຢູ່ໃນເຮືອນ. ສາລະຄະດີຕອນນີ້ຈະຖືກອອກອາກາດໄວໆນີ້. ຄູສາມາດຮັບຊົມວິດີໂອເພື່ອເບິ່ງເຕັກນິກການຊ່ວຍເຫຼືອນັກຮຽນຊົນເຜົ່າ ໄດ້ທາງຊ່ອງຢູທູບ ວິດີໂອສໍາລັບການພັດທະນາຄູ Development Videos.



| 2023-07-04 | KPL Pathet Lao Facebook |
|---|---|

ປະເທດລາວ Pathedlao
July 4 at 4:13 PM ·

ຝຶກອົບຮົມຄູ ສຳລັບໂຄງການຝຶກເວົ້າພາສາລາວ

ຂປລ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ ຝຶກອົບຮົມຄູຝຶກຫລັກແຫລ່ງຈາກ ສວສ, ວິທະຍາໄລຄູດົງຄຳຊ້າງ, ໂຮງຮຽນປະຖົມສົມບູນສາທິດດົງ ຄຳຊ້າງ ແລະ ໂຮງຮຽນປະຖົມທົ່ງກາງ ສຳລັບໂຄງການຝຶກເວົ້າພາສາລາວ ໃນວັນທີ 3-7 ກໍລະກົດ 2023 ເພື່ອຈະນຳໄປຝຶກອົບຮົມຕໍ່ໃຫ້ແກ່ຄູ ແລະ ຜູ້ອຳນວຍການໂຮງຮຽນ ຂັ້ນປະຖົມ 10 ແຂວງໃນລາວ, ທັງນີ້ ກໍເພື່ອຊ່ວຍໃຫ້ນັກຮຽນຊົນເຜົ່າ ທີ່ເຂົ້າຮຽນຊັ້ນປະຖົມສຶກສາ ແຕ່ຍັງບໍ່ທັນສາມາດເວົ້າພາສາລາວ ໄດ້ດີເທື່ອ ໃຫ້ມີທັກສະຮູ້ຫນັງສືພາສາລາວໄດ້ດີຂຶ້ນ.
ທ່ານ ຄຳຈັນ ວັດທະນອດ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ໃຫ້ຮູ້ວ່າ: ການຈັດຝຶກອົບຮົມໃນຄັ້ງນີ້ ເພື່ອໃຫ້ຄູຝຶກຫລັກແຫລ່ງມີຄວາມເຂົ້າໃຈດີກ່ຽວກັບ ປຶ້ມແບບ ຮຽນ ແລະ ຄູ່ມືຄູ ສະບັບປັບປຸງໃໝ່ ແລະ ມີຄວາມໝັ້ນໃຈໃນການຖ່າຍທອດຄວາມຮູ້ໃຫ້ແກ່ຄູສອນຊັ້ນ ປ1 ທີ່ຈະຈັດຕັ້ງປະຕິບັດໂຄງການຝຶກເວົ້າພາສາລາວ ຕັ້ງແຕ່ເດືອນກັນຍາ 2023, ຊຸດຝຶກອົບຮົມຍັງໄດ້ເນັ້ນໃສ່ເນື້ອເອກະສານຝຶກອົບຮົມ ຂອງໂຄງການຝຶກເວົ້າພາສາລາວ ສະບັບປັບປຸງ ແລະ ເຕັກນິກທີ່ມີປະສິດທິພາບ ໃນການພັດທະນາທັກສະການເວົ້າພາສາລາວຂອງນັກຮຽນ. ພ້ອມນີ້, ຜູ້ເຂົ້າຮ່ວມຍັງຈະໄດ້ກະກຽມການຝຶກອົບຮົມຄູ ກ່ຽວກັບການກຽມພ້ອມສຳລັບກິດຈະກຳຕ່າງໆ ທີ່ເຫມາະສົມກັບລະດັບພາສາຂອງນັກຮຽນ, ນຳໃຊ້ເກມ ເພື່ອສ້າງບັນຍາກາດການຮຽນໃຫ້ມ່ວນຊື່ນ ໃນການຮຽນພາສາ ແລະ ນຳໃຊ້ພາສາແມ່ ຂອງນັກຮຽນ ໂດຍໄດ້ຮັບການສະຫນັບສະຫນູນຈາກ ລັດຖະບານອົດສະຕຣາລີ ແລະ ອົງການ USAID ຜ່ານແຜນງານບີຄວາ.
ທ່ານ ບອັບ ແມັກລາລິນ ຫົວໜ້າຮັບຜິດຊອບວຽກງານນະໂຍບາຍ, ຍຸດທະສາດ ແລະ ການບໍລິຫານ ຂອງແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍ ໂອກາດເຂົ້າຮຽນການສຶກສາຂັ້ນພື້ນຖານ ຢູ່ ສປປ ລາວ (ແຜນງານບີຄວາ) ໄດ້ກ່າວວ່າ: ຖ້ານັກຮຽນຫາກຍັງບໍ່ເກັ່ງດ້ານພາສາ ໂດຍສະເພາະພາສາທີ່ນຳໃຊ້ໃນການຮຽນການສອນ, ມັນຈະເປັນສິ່ງທີ່ທ້າທາຍທີ່ສຸດສຳລັບພວກເຂົາທີ່ເຂົ້າໃຈຄຳເວົ້າຂອງຄູ, ການຮ່ວມກິດຈະກຳ ແລະ ການຮຽນໃຫ້ໄດ້ຜົນການຮຽນຕາມຄາດໝາຍ.
ລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ໃຫ້ການຊ່ວຍເຫລືອຊຸກຍູ້ຄວາມພະຍາຍາມຂອງຂອງກະຊວງສຶກສາທິການ ແລະ ກິລາ ເພື່ອນຳສະເໜີການປັບປຸງຊ່ວຍເຫລືອໃຫ້ແກ່ ນັກຮຽນເມື່ອເລີ່ມເຂົ້າຮຽນແຕ່ຍັງບໍ່ທັນເກັ່ງເວົ້າພາສາລາວ.
ພາຍຫລັງສຳເລັດການຝຶກອົບຮົມໃນເດືອນກໍລະກົດນີ້, ຄູຝຶກຫລັກແຫລ່ງຈະດຳເນີນການຝຶກອົບຮົມເນື້ອໃນປຶ້ມຮຽນ ແລະ ວິທີການສອນຂອງໂຄງການຝຶກເວົ້າພາສາລາວໃຫ້ແກ່ຄູ ແລະ ຜູ້ອຳນວຍການໂຮງຮຽນ ຂັ້ນປະຖົມ 10 ແຂວງໃນລາວ, ຄູຈະໄດ້ຝຶກປະຕິບັດຕົວຈິງ ເພື່ອໃຫ້ຮູ້ວ່າຈະສອນດ້ວຍຫລັກ ສູດໃໝ່ແບບໃດ ເພື່ອໃຫ້ໄດ້ປະສິດທິພາບ ແລະ ຈະສາມາດຊ່ວຍເຫລືອນັກຮຽນແບບໃດ ເພື່ອໃຫ້ຍົກລະດັບພາສາລາວໃຫ້ດີຂຶ້ນ.
ການຝຶກອົບຮົມ ຍັງເປັນໂອກາດອັນດີສຳລັບຄູ ແລະ ຜູ້ອຳນວຍການໂຮງຮຽນ ຂັ້ນປະຖົມໃນແຕ່ລະແຂວງ ເພື່ອມີການປະສານງານ, ບອກເລົ່າປະສົບການ ແລະ ສ້າງໃຫ້ມີການຊ່ວຍເຫລືອດ້ານວິຊາການເຖິງຊຸມຊົນໄດ້ຢ່າງຕໍ່ເນື່ອງ.
ຂ່າວ-ພາບ: ສຸກທະວີ



| 2023-07-06 | Edu-Sport TV online Facebook, TV and Youtube |
|---|---|

Edu-Sport TV online
July 6 at 3:26 PM ·

ອົດສະຕຣາລີ ແລະ USAID ຮ່ວມກັບ ສວສ ຝຶກອົບຮົມຄູຝຶກຫຼັກແຫຼ່ງ ສຳລັບໂຄງການຝຶກເວົ້າພາສາລາວ
------ ກົດລິ້ງເພື່ອເຂົ້າຊົມ: https://youtu.be/jt1SWM97hgo
::
ທ່ານສາມາດຕິດຕາມຊົມຜ່ານຊ່ອງທາງ YouTube: ໂທລະພາບສຶກສາ ແລະ ກິລາ LaoESTV Official
https://www.youtube.com/channel/UCYAJaAuMDfkUtOh59bYR76Q
::
#ຂ່າວສຶກສາ #ຂະແໜງການສຶກສາແລະກິລາ #ໂທລະພາບສຶກສາ #ໂທລະພາບສຶກສາແລະກິລາLAOESTV #ກະຊວງສຶກສາທິການແລະກິລາຂ່າວສຶກສາ #ຂະແໜງການສຶກສາແລະກິລາ #ໂທລະພາບສຶກສາ #laoestv



| 2023-07-06 | Pasaxon Facebook |
|---|---|




| 2023-07-10 | Tetra Tech International Development Facebook and LinkedIn |
|---|---|


Tetra Tech International Development Services
1d

The recently implemented Spoken Lao Program is opening doors to empower through language.

The Research Institute for Educational Sciences joins forces with Australia and the United States Agency for International Development through the #BEQUAL Program to inaugurate comprehensive training for Master Trainers of the Spoken Lao Program.

Given the diverse challenges in Laos, where 40% of grade 1 students lack confidence in Lao, the Spoken Lao Program has a huge impact in enhancing the Lao literacy skills of students who enter primary school without fluency. The revised program will be piloted in 21 districts across 10 provinces from September 2023.

Learn more: https://www.bequal-laos.org/research-institute-for-educati…/




Tetra Tech International Development
56,021 followers
1d

The recently implemented Spoken Lao Program is opening doors to empower through language.

The Research Institute for Educational Sciences joins forces with Australia and the United States Agency for International Development through the #BEQUAL Program to inaugurate comprehensive training for Master Trainers of the Spoken Lao Program.

Given the diverse challenges in Laos, where 40% of grade 1 students lack confidence in Lao, the Spoken Lao Program has a huge impact in enhancing the Lao literacy skills of students who enter primary school without fluency. The revised program will be piloted in 21 districts across 10 provinces from September 2023.

Learn more: https://lnkd.in/gUWitA_J

| 2023-07-04 | Vientiane Mai Website |
|---|---|



| 2023-07-04 | Lao Tribune Website |
|---|---|

Lao Tribune

General | Business | Fashion | Health | National | Politics | Sports | Technology | Press

TECHNOLOGY

## A Training Workshop Launched To Help Teachers Build Lao Literacy Skills Of Non-Lao Native Students

July 4, 2023 · lladmin · Comments Off

Research Institute for Educational Sciences, with support from Australia and the United States Agency for International Development through BEQUAL Programme has launched training for Master Trainers of the Spoken Lao Programme to help teachers build the Lao literacy skills of students who start primary school not yet able to speak Lao.

Starting in September 2023, the revised Spoken Lao Programme will be piloted in treatment and control schools in 21 selected districts across 10 provinces.

Laos is a culturally and linguistically rich country, with four main ethnolinguistic groups and over 50 languages.

When children begin school, they are fluent speakers of their home language, but around 40% of grade 1 children are not yet confident speakers of Lao.

This creates challenges for students and teachers, as children need to learn to read and write in Lao and also need to learn the curriculum content of the various subjects in Lao.

Mr. Khamchan Latthayord, Deputy Director General of the Research Institute for Educational Sciences (RIES) and Mr. Bob McLaughlin, Policy, Strategy, and Governance Manager, the Basic Education Quality and Access in the Lao PDR (BEQUAL) Program opened the training of trainers' workshop for the Spoken Lao Programme (SLP).

Fourteen Master Trainers from Research Institute for Educational Science (RIES), Ban Keun Teacher Training College, Sathid Primary School in Dongkhamxang Teacher Training College and Thongkang Primary School will be participating in this one-week workshop.

The training will focus on the contents of the revised SLP materials and effective techniques for developing students' oral Lao language skills.

Participants will also prepare to train teachers on adapting activities to suit the language level of their students, using games to create an enjoyable atmosphere for language learning, and using students' first languages to support Lao language learning.

The implementation of this new phase of the SLP will receive the support of the Government of Australia and the United States Agency for International Development (USAID) through the BEQUAL programme.

Mr. Khamchan commented, "The objective of this training is to provide Master Trainers with a good understanding of the revised materials and confidence to pass on their knowledge to the Grade 1 teachers who will implement the Spoken Lao Programme from September 2023. We're grateful to the governments of Australia and the United States of America for assisting the Ministry of Education and Sports to reach the goal of quality education for all children in Laos".

Mr. Bob McLaughlin added "If students aren't competent in the language of instruction, it is extremely challenging for them to understand the teacher, participate in activities and achieve the expected learning outcomes. Australia and USAID, through the BEQUAL programme, are honored to support the efforts of the Ministry of Education and Sports to introduce remedial support for students that start school not yet able to speak Lao. Together, we are working towards a more inclusive education system in Laos."

Ms. Phonesiri Outthaivanh, Lao Language Research Centre at RIES explained, "In 2019, MoES with the support of the Australian government launched the Spoken Lao Pilot consisting of an additional five hours of Lao language lessons each week (in addition to normal school hours) to improve grade 1 students' Lao speaking and listening skills. SLP was previously trialed in 7 districts with large numbers of ethnic students who do not speak Lao at home in Phongsaly, Borikhamxay, Khammuan and Saravan provinces between 2019 and 2021. Drawing on lessons learned and teachers' feedback from this pilot, the Spoken Lao materials and approach were improved, and further user tested by teachers through classroom trials. Our dedicated division for Lao Language Research was established to lead on these developments and the pilot was upgraded to a Programme. The revised materials were formally approved for use in April 2023 by the Committee for the Approval of Curriculum and Instructional Materials. An expanded trial of the new materials will be carried out in 21 districts in 10 provinces in school year 2023 – 2024."

In July the Master Trainers will deliver the Spoken Lao Programme training to teachers and pedagogical support staff in 10 provinces across Laos. Teachers will be given hands-on training on how to deliver the new programme effectively and how to support students' Lao language development more broadly. The training will also be an opportunity for teachers and pedagogical support staff in each province to connect, share experiences, and create an ongoing community of professional support.

In addition to the Spoken Lao Programme, MoES with the support of Australia, is currently producing a role model teacher video in which a teacher in a remote village in Phongsaly shares her experiences of teaching ethnic students who speak a language other than Lao at home. This documentary will be available soon. Teachers can also watch a training video on techniques to support ethnic students, which is available on the ?????????????????????? Teacher Development Videos YouTube channel.

